# ກະຊວງອຸດສາຫະກຳ ແລະ ການຄ້າ

## ສະຖາບັນຄົ້ນຄວ້າອຸດສາຫະກຳ ແລະ ການຄ້າ

# ບົດຄົ້ນຄວ້າຫຍໍ້ດ້ານນະໂຍບາຍ

## ຜົນກະທົບຂອງໂຄວິດ-19 ຕໍ່ຜູ້ຜະລິດສິນ ຄ້າໜຶ່ງເມືອງ-ໜຶ່ງຜະລິດຕະພັນ (ODOP)


### ສະຫຼຸບຫຍໍ້

ຈາກການສຶກສາໂດຍອີງໃສ່ຂໍ້ມູນທີ່ໄດ້ສຳຫຼວດຜ່ານ Google Form ສະແດງໃຫ້ເຫັນວ່າຜູ້ຜະລິດສິນຄ້າໜຶ່ງເມືອງ-ໜຶ່ງຜະລິດຕະພັນ (ໂອດອບ) ແມ່ນໄດ້ຮັບຜົນກະທົບຫຼາຍຈາກສະພາບເສດຖະກິດທີ່ຝືດເຄືອງຍ້ອນການລະບາດຂອງໂຄວິດ-19. ບັນຫາທີ່ຜູ້ຜະລິດໂອດອບ ພົບພໍ້ຫຼາຍທີ່ສຸດແມ່ນຕະຫຼາດຈຳໜ່າຍຜະລິດຕະພັນໂອດອບທີ່ຫຼຸດລົງຫຼາຍໃນປັດຈຸບັນ ແລະ ເຮັດໃຫ້ຜູ້ຜະລິດໂອດອບຈຳນວນໜຶ່ງຢຸດຕິການຜະລິດໃນຊ່ວງວິດກິດການນີ້ ເຊິ່ງອີງໃສ່ຂໍ້ມູນທີ່ໄດ້ສຳຫຼວດຄັ້ງນີ້ມີ 36.3% (74 ຫໜ) ຕິດຕໍ່ບໍ່ໄດ້ ແລະ 35.8% (73 ຫໜ) ບໍ່ສາມາດເຂົ້າຮ່ວມການສຳຫຼວດ.

ການສຳຫຼວດຄັ້ງນີ້ຍັງພົບວ່າການນຳໃຊ້ເຕັກໂນໂລຊີຂອງຜູ້ຜະລິດສິນຄ້າໂອດອບໃນຂາຍສິນຄ້າຜ່ານລະບົບອອນລາຍແມ່ນມີໜ້ອຍຫຼາຍ ເຊິ່ງຖືເປັນບັນຫາທ້າທາຍໃນຍຸກການຕະຫຼາດທີ່ຕ້ອງປັບໂຕເຂົ້າໃນວິຖີການດຳລົງຊີວິດແບບໃໝ່. ການສົ່ງເສີມໃຫ້ນຳໃຊ້ ແລະ ພັດທະນາຄວາມສາມາດຂອງຜູ້ປະກອບການຜະລິດສິນຄ້າໂອດອບກ່ຽວກັບເຕັກໂນໂລຊີການສື່ສານສະໄໝໃໝ່ຮັບໃຊ້ການຕະຫຼາດ ແລະ ການຂາຍຈຶ່ງມີຄວາມຈຳເປັນ ແລະ ຄວນໄດ້ຮັບການຊ່ວຍເຫຼືອຈາກພາກສ່ວນທີ່ກ່ຽວຂ້ອງ.






18 ສິງຫາ 2021

# ຜົນກະທົບຂອງໂຄວິດ-19 ຕໍ່ຜູ້ຜະລິດສິນຄ້າໜຶ່ງເມືອງ-ໜຶ່ງຜະລິດຕະພັນ (ODOP)

ໂດຍ ວຽງສະຫວ່າງ ທິບພະວົງ[1]

## ພາກສະເໜີ

ນັບແຕ່ມີການຢັ້ງຢືນຜູ້ຕິດເຊື້ອໂຄວິດ-19 ໃນຕົ້ນປີ 2020 ແລະ ການລະບາດຮອບໃໝ່ຈາກເດືອນເມສາ 2021 ຈົນມາຮອດປັດຈຸບັນ ໄດ້ເຮັດໃຫ້ທຸລະກິດສ່ວນໃຫຍ່ຂອງປະເທດຕ້ອງກັບຄືນສະພາບຈຳກັດຂອບເຂດທຸລະກິດ. ທຸລະກິດທີ່ໄດ້ຮັບກະທົບຈາກຮອບທຳອິດແມ່ນເລີ່ມປັບໂຕ ແລະ ກຳລັງຟື້ນກິດຈະການຄືນໃໝ່ ແຕ່ກໍພົບກັບການລະບາດໃນຮອບທີສອງເຊິ່ງຖືວ່າມີຂະໜາດທີ່ຮຸນແຮງກວ່າເກົ່າເພາະລັດຖະບານໄດ້ໃຊ້ມາດຕະການປິດເມືອງຄືນຂຶ້ນ ແລະ ເຂັ້ມງວດກວ່າເກົ່າ.

ມີຫຼາຍບົດສຶກສາກ່ຽວກັບຜົນກະທົບຂອງໂຄວິດ-19 ໃນໄລຍະຜ່ານມາໄດ້ກວມເອົາທຸລະກິດທົ່ວໄປ ແລະ ໂຮງງານອຸດສາຫະກຳ ຢູ່ ສປປ ລາວ ເຊິ່ງຖືວ່າເປັນຂໍ້ມູນທາງ ດ້ານວິຊາການທີ່ສຳຄັນສຳລັບການສຶກສາໃນຂົງເຂດທຸລະກິດອື່ນ. ດັ່ງນັ້ນ, ເພື່ອປະກອບສ່ວນເພີ່ມຕື່ມດ້ານວິຊາການຕໍ່ກັບບັນຫາຜົນກະທົບຂອງໂຄວິດ-19 ບົດສຶກສານີ້ແມ່ນຈະນຳສະເໜີສະພາບການດຳເນີນທຸລະກິດຂອງຜູ້ປະກອບການຜະລິດສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນ (ໂອດອບ) ຕໍ່ກັບຜົນກະທົບ ທີ່ເກີດຈາກໂຄວິດ-19 ໃນປັດຈຸບັນໂດຍລວມມີສາມຈຸດປະສົງດັ່ງລຸ່ມນີ້:

1) ສຶກສາຜົນກະທົບຕໍ່ການຜະລິດ ແລະ ຈຳໜ່າຍ; 2) ບັນຫາທີ່ທຸລະກິດພົບພໍ້ ແລະ 3) ມາດຕະການຊຸກຍູ້ສົ່ງເສີມຜູ້ຜະລິດໂອດອບໃນສະພາບເສດຖະກິດໄດ້ຮັບຜົນກະທົບຈາກການລະບາດ ຂອງໂຄວິດ-19 ຢູ່ ສປປ ລາວ.

## ວິທີການສຶກສາ

ເພື່ອຕອບຈຸດປະສົງຂອງການຄົ້ນຄວ້າທີ່ໄດ້ຍົກຂຶ້ນບົດສຶກສານີ້ໄດ້ໃຊ້ຂໍ້ມູນທີ່ໄດ້ຮັບຈາກການສຳຫຼວດໂດຍຜ່ານ Google Form ສຳພາດຜູ້ຜະລິດສິນຄ້າໂອດອບໃນຂອບເຂດທົ່ວປະເທດ[2]. ການສຳຫຼວດແມ່ນເລີ່ມແຕ່ວັນທີ 30 ມິຖຸນາ - 28 ກໍລະກົດ 2021 ໄດ້ຕິດຕໍ່ 204 ຫົວໜ່ວຍ ແຕ່ມີຜູ້ຕອບຄືນທັງໝົດ 57 ຫົວໜ່ວຍ (ຕິດຕໍ່ບໍ່ໄດ້ 74 ຫໜ ແລະ ບໍ່ຕອບ 73 ຫໜ); ໃນຈຳນວນຜູ້ທີ່ໄດ້ຕອບແບບສອບຖາມຫຼາຍກວ່າໝູ່ແມ່ນຜູ້ຜະລິດອາຫານ (15 ຫໜ), ຕ່ຳແຜ່ນແພ (11 ຫໜ) ແລະ ເຄື່ອງດື່ມສະໝູນໄພ (10 ຫໜ) ຕາມລຳດັບ ດັ່ງຮູບສະແດງ 1; ຫົວໜ່ວຍໂອດອບທີ່ໄດ້ຕອບແບບສອບຖາມແຍກຕາມ ແຂວງຫຼາຍກວ່າໝູ່ແມ່ນຢູ່ນະຄອນຫຼວງວຽງຈັນ, ແຂວງວຽງຈັນ, ແຂວງສະຫວັນນະເຂດ ແລະ ແຂວງຈຳປາສັກ ດັ່ງສະແດງ ໃນຮູບສະແດງ 2. ບົດບາດຜູ້ຕອບແບບສຳພາດ 93% ແມ່ນ ເຈົ້າຂອງທຸລະກິດ/ຜູ້ບໍລິຫານ ແລະ 7% ແມ່ນພະນັກງານປະຈຳ.

ຮູບສະແດງ 1: ຫົວໜ່ວຍໂອດອບທີ່ຕອບແບບສອບຖາມແຍກຕາມປະເພດສິນຄ້າ




ຮູບສະແດງ 2: ຫົວໜ່ວຍໂອດອບໄດ້ຕອບແບບສອບຖາມແຍກຕາມແຂວງ




[1] ຮອງຫົວໜ້າສະຖາບັນອຸດສາຫະກຳ ແລະ ການຄ້າ

[2] ອີງຕາມສະຖິຕິຜູ້ຜະລິດໂອດອບຂອງກົມສົ່ງເສີມການຄ້າ, ກະຊວງອຸດສາຫະກຳ ແລະ ການຄ້າ (23 ມິຖຸນາ 2021)

### ການສຶກສາໄລຍະຜ່ານມາ

ອີງຕາມການລາຍງານສະຖິຕິຕົວເລກຜູ້ຕິດເຊື້ອໃໝ່ຂອງກະຊວງສາທາລະນະສຸກ ຊີ້ໃຫ້ເຫັນວ່າ ສປປ ລາວ ເລີ່ມມີການລະບາດຮອບໃໝ່ໃນຊຸມຊົນ ນັບແຕ່ວັນທີ 17 ເມສາ 2021 ຈາກທີ່ບໍ່ມີຜູ້ຕິດເຊື້ອໃໝ່ໃນຊຸມຊົນມາໄດ້ເກືອບ 6 ເດືອນ (ນັບແຕ່ ວັນທີ 23 ພະຈິກ 2020)[3].

ຜົນກະທົບໃນຮອບໃໝ່ນີ້ໄດ້ເຮັດໃຫ້ທຸ ລະກິດຂອງປະເທດທີ່ກຳລັງຟື້ນໂຕຈາກຮອບທີ່ໜຶ່ງຕ້ອງພົບບັນຫາໜັກຂຶ້ນກວ່າເກົ່າຍ້ອນຈຳນວນຜູ້ຕິດເຊື້ອທີ່ມີຫຼາຍຂຶ້ນ ແລະ ໄລຍະເວລາປິດເມືອງທີ່ຍາວຂຶ້ນກວ່າເກົ່າ. ອ່ອນພັນດາລາ (2021) ໄດ້ສຳຫຼວດຜູ້ປະກອບການທຸລະກິດຈຳນວນ 619 ຄົນ ກ່ຽວກັບ ຜົນກະທົບຂອງໂຄວິດ-19 ໃນຮອບໃໝ່ ພົບວ່າມີຫຼາຍກວ່າ 78% ຕອບວ່າຜົນກະທົບຄັ້ງໃໝ່ນີ້ແມ່ນມີລະດັບແຮງ 61% ຈົນເຖິງ 100%.

ຜົນກະທົບຈາກໂຄວິດຮອບໃໝ່ຍັງຖືກສຳຫຼວດຈາກສະພາການຄ້າແລະອຸດສາຫະກຳຂອງສະຫະພາບເອີລົບປະຈຳ ສປປ ລາວ ເຊິ່ງມີ 64 ບໍລິສັດເຂົ້າຮ່ວມຜົນການສຳຫຼວດຊີ້ໃຫ້ເຫັນວ່າສະພາບການລະບາດຂອງໂຄວິດຮອບໃໝ່ທຽບກັບຕົ້ນປີ 2020 ໄດ້ກະທົບຕໍ່ບໍລິສັດເກືອບທັງໝົດທີ່ໄດ້ສຳຫຼວດ 83% ໃນນີ້ 20% ແມ່ນມີລະດັບຜົນກະທົບເທົ່າເກົ່າ, 27% ຫຼາຍຂຶ້ນກວ່າເກົ່າ ສົມຄວນ ແລະ 36% ແມ່ນຮຸນແຮງກວ່າເກົ່າ (ECCIL, 2021).

ຜົນການສຳຫຼວດຜົນກະທົບຈາກໂຄວິດ-19 ໃນ 129 ໂຮງງານຢູ່ ສປປ ລາວ ໂດຍອົງການ UNIDO (2021) ຍັງຊີ້ໃຫ້ເຫັນວ່າຫຼາຍກວ່າ 2/3 ຂອງໂຮງງານທີ່ໄດ້ສຳຫຼວດແມ່ນພົບບັນຫາຫຼັກຄືປະລິມານການສັ່ງຊື້ຈາກລູກຄ້າຫຼຸດລົງຫຼາຍ ແລະ ຮອງລົງມາແມ່ນຕົ້ນທຶນວັດຖຸດິບເພີ່ມສູງຂຶ້ນ ເຊິ່ງສອງບັນຫາໃຫຍ່ນີ້ຖືໄດ້ວ່າຍັງເປັນບັນຫາໃຫຍ່ທີ່ກະທົບຕໍ່ໂຮງງານຜະລິດສິນຄ້າເພື່ອສົ່ງອອກເຊັ່ນກັນ ນັບແຕ່ເກີດການລະບາດໃນຮອບທຳອິດຜ່ານມາ (UNIDO, 2020; ມະໂນລົມ, 2020).

ການສຶກສາໃນໄລຍະຜ່ານມາທີ່ໄດ້ຍົກຂຶ້ນຂ້າງເທິງໄດ້ສະແດງໃຫ້ເຫັນວ່າຫົວໜ່ວຍທຸລະກິດໂດຍລວມຂອງປະເທດແມ່ນໄດ້ຮັບຜົນກະທົບໜັກຈາກການລະບາດຂອງໂຄວິດ-19 ຈາກຮອບທຳອິດ ແລະ ປັດຈຸບັນ. ຢ່າງໃດກໍດີ ຈາກການທົບທວນບົດສຶກສາຜ່ານມາແມ່ນຍັງບໍ່ທັນມີການສຶກສາສະເພາະກ່ຽວກັບຜູ້ປະກອບການຜະລິດສິນຄ້າໂອດອບ. ໃນເງື່ອນໄຂທີ່ລັດຖະບານທັນມາສົ່ງເສີມການຜະລິດພາຍໃນເພື່ອທົດແທນການນຳເຂົ້າໄປພ້ອມກັບການນຳໃຊ້ມາດຕະການຄວບຄຸມການລະບາດ ໂດຍການປິດເມືອງ, ການເຂັ້ມງວດຕໍ່ລົດຂົນສົ່ງສິນຄ້າເຂົ້າ-ອອກປະເທດ ແລະ ສະພາບລາຄາສິນຄ້ານຳເຂົ້າແພງຂຶ້ນໃນປັດຈຸບັນ; ດັ່ງນັ້ນ ຈຶ່ງຄາດວ່າສິນຄ້າໂອດອບອາດຈະມີໂອກາດດ້ານການຕະຫຼາດທີ່ເພີ່ມຂຶ້ນແຕ່ຈະເປັນໄປແນວໃດນັ້ນ ແມ່ນໄດ້ອະທິບາຍໃນພາກວິເຄາະຂໍ້ມູນຈາກການສຳຫຼວດລຸ່ມນີ້.

### ຜົນການສຳຫຼວດຜູ້ປະກອບການໂອດອບ

#### ການຊື້ວັດຖຸດິບ

ໃນການຜະລິດສິນຄ້າໂອດອບໃນຊ່ວງລະບາດຂອງໂຄວິດ-19 ໂດຍລວມເຫັນວ່າຜູ້ຜະລິດທີ່ໃຊ້ວັດຖຸດິບພາຍໃນແມ່ນບໍ່ມີບັນຫາຫຼາຍກ່ຽວກັບການເຂົ້າເຖິງວັດຖຸດິບເພາະມີຜູ້ຕອບ 60% ສາມາດຊື້ວັດຖຸດິບຢູ່ພາຍໃນໄດ້ປົກກະຕິ; ຢ່າງໃດກໍດີ ມີ 14% ບອກວ່າສັ່ງຊື້ວັດຖຸດິບຈາກຕ່າງປະເທດມີຄວາມຫຍຸ້ງຍາກ ແລະ 24% ບອກວ່າສັ່ງຊື້ວັດຖຸດິບພາຍໃນໄດ້ຍາກ. ມີພຽງ 2% ທີ່ບອກວ່າສັ່ງຊື້ຈາກຕ່າງປະເທດແມ່ນເຮັດໄດ້ປົກກະຕິ.

ຮູບສະແດງ 3: ສະພາບການເຂົ້າເຖິງວັດຖຸດິບ




### ສະພາບການປ່ຽນແປງລາຄາວັດຖຸດິບໃນຊ່ວງໂຄວິດ-19

ບັນຫາໃຫຍ່ທີ່ເປັນປັດໄຈກະທົບຕໍ່ການປ່ຽນແປງລາຄາວັດຖຸດິບຈາກຕ່າງປະເທດແມ່ນຄ່າຂົນສົ່ງແພງ ແລະ ເງິນກີບເຟີ້ກວມເອົາ 43% ແລະ 35% ຕາມລຳ

---

[3] ຂໍ້ມູນຈາກເວັບໄຊກະຊວງສາທາລະນະສຸກ <www.moh.gov.la>

ດັບຂອງຜູ້ຕອບແບບສອບຖາມ. ສໍາລັບລາຄາວັດຖຸດິບຈາກພາຍໃນແມ່ນມີຜູ້ຕອບວ່າປ່ຽນແປງທໍາມະດາ 31% ແລະ ເທົ່າເກົ່າ 21%.

ຮູບສະແດງ 4: ລາຄາປັດໄຈການຜະລິດ




## ເງິນທຶນຂອງທຸລະກິດ

ຜູ້ປະກອບການໂອດອບຫຼາຍກວ່າເຄິ່ງໜຶ່ງທີ່ໄດ້ຕອບແບບສອບຖາມ (61%) ແມ່ນໃຊ້ທຶນສ່ວນຕົວ ຫຼື ຂອງຄອບຄົວໃນການດໍາເນີນທຸລະກິດ; ຮອງລົງມາ 21% ແມ່ນຢືມເງິນຈາກທະນາຄານທຸລະກິດ ແລະ ມີ 11% ຕອບວ່າສາມາດຢືມເງິນຈາກກອງທຶນສົ່ງເສີມ SME[4]. ໄດ້ຢືມເງິນຈາກສະຖາບັນການເງິນຈຸລະພາກ ແລະ ເງິນກອງທຶນກຸ່ມກອມ 4% ແລະ 3% ຕາມລໍາດັບ (ຮູບ 5).

ຮູບສະແດງ 5: ແຫຼ່ງທຶນ




## ການຢືມເງິນທະນາຄານ ແລະ ດອກເບ້ຍ

ໃນຈໍານວນທີ່ໄດ້ຕອບແບບສອບຖາມກ່ຽວກັບບັນຫາການຢືມເງິນທະນາຄານ (17 ຫໜ) ພົບວ່າ 76% ຕອບວ່າຊ່ວງລະບາດຂອງໂຄວິດ-19 ທຸລະກິດບໍ່ໄດ້ຮັບນະໂຍບາຍພິເສດໃນການຢືມເງິນທະນາຄານ, ມີພຽງ 24% ບອກວ່າຢືມເງິນໄດ້ງ່າຍຂຶ້ນ (ກຸ່ມທີ່ສາມາດຢືມເງິນກອງທຶນສົ່ງເສີມ SMEs). ສໍາລັບທຸລະກິດທີ່ຕອບກ່ຽວກັບບັນຫາອັດຕາດອກເບ້ຍທະນາຄານ (19 ຫໜ) 79% ບອກວ່າດອກເບ້ຍແມ່ນຍັງຄືເກົ່າບໍ່ປ່ຽນແປງ ແລະ ມີ 21% ໄດ້ຮັບການເລື່ອນຊໍາລະຕົ້ນທຶນ ແລະ ດອກເບ້ຍ.

ຮູບສະແດງ 6: ການເຂົ້າຫາແຫຼ່ງທຶນ




## ການຂາຍ

ເກືອບທັງໝົດຫົວໜ່ວຍທຸລະກິດໂອດອບທີ່ຕອບແບບສອບຖາມ (52 ຫໜ) ແມ່ນພົບບັນຫາຍອດຂາຍຫຼຸດລົງແຕ່ 10% ເຖິງ 40%. ອັດຕາສ່ວນຍອດຂາຍຫຼຸດລົງແຕ່ 50%, 70% ແລະ ຫຼາຍກວ່າ 70% ແມ່ນກວມຈໍານວນຫຼາຍ (46 ຫໜ); ມີພຽງ 4 ຫົວໜ່ວຍທີ່ຍອດຂາຍບໍ່ປ່ຽນແປງ[5] ແລະ 1 ຫົວໜ່ວຍແມ່ນເພີ່ມຂຶ້ນ[6].

ຮູບສະແດງ 7: ສະພາບການຂາຍສິນຄ້າໂອດອບ




[4] ທຸລະກິດໂອດອບທີ່ເຂົ້າຮ່ວມຕອບແບບສອບຖາມຢືມ ເງິນກອງທຶນສົ່ງເສີມ SMEs ແມ່ນຜູ້ຜະລິດສິນຄ້າໂອດອບ ຄື: ປາແດກ, ຊາຂຽວ, ຫັດຖະກໍາຕໍ່າແຜ່ນ, ໄມ້ເກາະສະລັກ ແລະ ເຟີນິເຈີ.

[5] ທຸລະກິດໂອດອບທີ່ຜະລິດ ແປ້ງເຫຼົ້າ, ເກືອ, ເຕົາປະຢັດ ແລະ ເຂົ້າສານອິນຊີ

[6] ທຸລະກິດໂອດອບທີ່ຜະລິດຢາພື້ນເມືອງ

### ສະພາບຕະຫຼາດຈຳໜ່າຍ

ໂດຍລວມສັງເກດເຫັນວ່າການຂາຍຜະລິດຕະພັນສິນຄ້າໂອດອບ ຢູ່ 5 ສະຖານທີ່ຈຳໜ່າຍທີ່ໄດ້ຖາມໃນແບບສອບຖາມແມ່ນຫຼຸດລົງ (ຕາຕະລາງ 1). ຂາຍຮ້ານສັບພະສິນຄ້າ ແລະ ຂາຍໃຫ້ລູກຄ້າປະຈຳ ແມ່ນ 2 ຕະຫຼາດຫຼັກໃນການຈຳໜ່າຍສິນຄ້າໂອດອບເຖິງວ່າຈະມີປະລິມານຫຼຸດລົງກໍຕາມ. ອີງຕາມຮູບສະແດງ 8 ຂາຍໃຫ້ຮ້ານສັບພະສິນຄ້າ 25% ຂອງຜູ້ຕອບແມ່ນຂາຍໄດ້ປານກາງ, ມີ 22% ຕອບວ່າໄດ້ຫຼາຍ ແລະ 6% ຕອບວ່າໄດ້ຫຼາຍທີ່ສຸດ; ຂາຍລູກຄ້າປະຈຳ ມີ 34% ສາມາດຂາຍໃນລະດັບປານກາງ, 7% ຕອບວ່າຂາຍໄດ້ຫຼາຍ ແລະ 7% ແມ່ນຂາຍໄດ້ຫຼາຍຂຶ້ນຫຼາຍ. ຢ່າງໃດກໍດີ ຂາຍຢູ່ຕະຫຼາດ, ຂາຍອອນລາຍ, ຂາຍໃຫ້ນັກທ່ອງທ່ຽວ ແລະ ສົ່ງອອກມີຈຳນວນຜູ້ຕອບທີ່ບອກວ່າຂາຍໄດ້ໜ້ອຍ ແລະ ໜ້ອຍຫຼາຍແມ່ນກວມເປີເຊັນຫຼາຍກວ່າສາມາດຂາຍໄດ້ລະດັບປານກາງ ຫາ ຫຼາຍ.

ຕາຕະລາງ 1: ສະພາບຕະຫຼາດຈຳໜ່າຍ

| | ຂາຍໃຫ້ຮ້ານ ສັບພະສິນຄ້າ | | ຂາຍໃຫ້ລູກ ຄ້າປະຈຳ | | ຂາຍຢູ່ ຕະຫຼາດ | | ຂາຍຜ່ານ ອອນລາຍ | | ຂາຍໃຫ້ນັກ ທ່ອງທ່ຽວ | | ຂາຍໄປຕ່າງ ປະເທດ | |
|---|---|---|---|---|---|---|---|---|---|---|---|---|
| | ຈ/ນ | ເປີເຊັນ | ຈ/ນ | ເປີເຊັນ | ຈ/ນ | ເປີເຊັນ | ຈ/ນ | ເປີເຊັນ | ຈ/ນ | ເປີເຊັນ | ຈ/ນ | ເປີເຊັນ |
| ໜ້ອຍຫຼາຍ | 14 | 27% | 9 | 31% | 8 | 35% | 11 | 73% | 7 | 47% | 9 | 64% |
| ໜ້ອຍ | 10 | 20% | 6 | 21% | 8 | 35% | 2 | 13% | 5 | 33% | 3 | 21% |
| ປານກາງ | 13 | 25% | 10 | 34% | 4 | 17% | 1 | 7% | 3 | 20% | 2 | 14% |
| ຫຼາຍ | 11 | 22% | 2 | 7% | 2 | 9% | 1 | 7% | | | | |
| ຫຼາຍທີ່ສຸດ | 3 | 6% | 2 | 7% | 1 | 4% | | | | | | |
| ລວມ | 51 | 100% | 29 | 100% | 23 | 100% | 15 | 100% | 15 | 100% | 14 | 100% |

(ໝາຍເຫດ: ຕົວເລກຈາກຜູ້ຕອບທີ່ສາມາດເລືອກຕອບຕາມຄວາມເໝາະສົມ)

ຮູບສະແດງ 8: ສະພາບຕະຫຼາດຈຳໜ່າຍ




(ໝາຍເຫດ: ຜູ້ຕອບໃຫ້ຄະແນນສະພາບການຈຳໜ່າຍ 1 ຈຳໜ່າຍໄດ້ໜ້ອຍຫຼາຍ - 5 ຈຳໜ່າຍໄດ້ຫຼາຍທີ່ສຸດ)

### ຂໍ້ສະເໜີຕໍ່ລັດຖະບານ

ຈາກການສັງລວມຂໍ້ສະເໜີໃນຕາຕະລາງ 2 ແລະ ສະແດງໃນຮູບສະແດງ 9 ເຫັນວ່າໃນຊ່ວງການລະບາດຂອງໂຄວິດ-19 ການເຂົ້າເຖິງເງິນກູ້ດອກເບ້ຍຕ່ຳຍັງເປັນຫົວຂໍ້ສຳຄັນອັນດັບທຳອິດຂອງທຸລະກິດທີ່ໄດ້ຕອບແບບສອບຖາມ (53%), ອັນດັບສຳຄັນຮອງລົງມາແມ່ນຕ້ອງການໃຊ້ຊ່ວຍດ້ານຕະຫຼາດຈຳໜ່າຍ (46%), ໂຄສະນາກ່ຽວກັບສິນຄ້າໂອດອບຊ່ວຍ (39%) ແລະ ຊ່ວຍສົ່ງເສີມການຊື້ ແລະ ນຳໃຊ້ສິນຄ້າໂອດອບ (33%). ສຳລັບຄວາມຄາດຫວັງຕ້ອງການໃຫ້ລັດຖະບານຊ່ວຍເຫຼືອເພີ່ມຕື່ມໃນຊ່ວງຫຼັງການລະບາດມີຫົວຂໍ້ສຳຄັນ ຄື: ຊ່ວຍດ້ານການຕະຫຼາດ (33%), ຝຶກອົບຮົມເຕັກນິກການຜະລິດ ແລະ ບໍລິຫານ (32%), ສົ່ງເສີມໃຫ້ຊື້-ນຳໃຊ້ສິນຄ້າໂອດອບ (30%) ແລະ ໃຫ້ທຶນເພື່ອຍົກລະດັບຄວາມສາມາດໃນການຜະລິດ (26%).

ຕາຕະລາງ 2: ສັງລວມຂໍ້ສະເໜີຂອງທຸລະກິດໂອດອບ

| | ໃນຊ່ວງລະບາດ ໂຄວິດ-19 | | ຫຼັງການລະບາດ ໂຄວິດ-19 | | ບໍ່ມີຄຳເຫັນ | | ລວມ |
|---|---|---|---|---|---|---|---|
| | ຈ/ນ | ເປີເຊັນ | ຈ/ນ | ເປີເຊັນ | ຈ/ນ | ເປີເຊັນ | |
| ດ້ານຕະຫຼາດຈຳໜ່າຍ | 26 | 46% | 19 | 33% | 12 | 21% | 100% |
| ຝຶກອົບຮົມດ້ານເຕັກນິກ ແລະບໍລິຫານທຸລະກິດ | 8 | 14% | 18 | 32% | 31 | 54% | 100% |
| ໃຫ້ເຂົ້າເຖິງແຫຼ່ງເງິນກູ້ດອກເບ້ຍຕ່ຳ | 30 | 53% | 12 | 21% | 15 | 26% | 100% |
| ໂຄສະນາສິນຄ້າສູ່ສັງຄົມ | 22 | 39% | 13 | 23% | 22 | 39% | 100% |
| ສົ່ງເສີມໃຫ້ນຳໃຊ້ ແລະ ຊື້ສິນຄ້າໂອດອບ | 19 | 33% | 17 | 30% | 21 | 37% | 100% |
| ໃຫ້ທຶນຊ່ວຍຍົກລະດັບເຕັກນິກການຜະລິດ | 16 | 28% | 15 | 26% | 26 | 46% | 100% |
| ປັບປຸງການຜະລິດໃຫ້ໄດ້ຮັບໃບຢັ້ງຢືນ ອຢ | 9 | 16% | 7 | 12% | 41 | 72% | 100% |
| ປັບປຸງການຜະລິດໃຫ້ໄດ້ໃບຢັ້ງຢືນມາດຕະຖານ | 11 | 19% | 11 | 19% | 35 | 61% | 100% |

ຮູບສະແດງ 9: ສັງລວມຂໍ້ສະເໜີທຸລະກິດໂອດອບ




ຖ້າແຍກຂໍ້ສະເໜີຕາມປະເພດຂອງຜູ້ຜະລິດສິນຄ້າໂອດອບ (ຮູບສະແດງ 10) ໂດຍສະເພາະແມ່ນສີ່ອັນດັບຕົ້ນ ເຊັ່ນ: ການຢືມເງິນດອກເບ້ຍຕ່ຳ, ຊ່ວຍດ້ານຕະຫຼາດຈຳໜ່າຍ, ຊ່ວຍໂຄສະນາ ແລະ ຊ່ວຍບໍລິໂພກສິນຄ້າໂອດອບທີ່ຜູ້ຜະລິດສິນຄ້າໜຶ່ງເມືອງ-ໜຶ່ງຜະລິດຕະພັນສະເໜີຂໍຄວາມຊ່ວຍເຫຼືອຈາກລັດຖະບານຫຼາຍທີ່ສຸດ

(ອີງໃສ່ຕາຕະລາງ 2) ແມ່ນເຫັນວ່າຜູ້ຜະລິດປະເພດອາຫານ, ຜູ້ຜະລິດເຄື່ອງດື່ມປະເພດສະໝຸນໄພ ແລະ ຜູ້ຜະລິດເຄື່ອງທັດ ຖະກຳຕໍ່າແຜ່ນແມ່ນກຸ່ມທີ່ສະເໜີຂໍຄວາມຊ່ວຍເຫຼືອຈາກລັດຖະບານໃນຊ່ວງລະບາດຂອງໂຄວິດ.

ຮູບສະແດງ 10: ສັງລວມຂໍ້ສະເໜີໃນຊ່ວງເກີດໂຄວິດ-19 ໂດຍແຍກຕາມປະເພດຜູ້ຜະລິດສິນຄ້າໂອດອບ




## ສະຫຼຸບລວມ

ການສຳຫຼວດຜົນກະທົບຂອງໂຄວິດ-19 ຕໍ່ຜູ້ຜະລິດສິນຄ້າໜຶ່ງເມືອງ ໜຶ່ງຜະລິດຕະພັນ (ໂອດອບ) ສາມາດຕີລາຄາໄດ້ວ່າຜູ້ຜະລິດສິນຄ້າໂອດອບແມ່ນໄດ້ຮັບຜົນກະທົບຫຼາຍໃນສະພາບເສດຖະກິດຂອງປະເທດທີ່ມີຄວາມຫຍຸ້ງຍາກຈາກການລະບາດຂອງໂຄວິດ-19ໃນປັດຈຸບັນ. ບັນຫາໜັກທີ່ພົບພໍ້ແມ່ນຕະຫຼາດຈຳໜ່າຍຜະລິດຕະພັນໂອດອບທີ່ຫຼຸດລົງຫຼາຍໃນປັດຈຸບັນເຊິ່ງເກີດຈາກສະພາບເສດຖະກິດຂອງປະເທດທີ່ໄດ້ຮັບຜົນກະທົບຈາກໂຄວິດ-19 ແລະ ກໍອາດເຮັດໃຫ້ຜູ້ຜະລິດສິນຄ້າໂອດອບຈຳນວນໜຶ່ງຢຸດຕິການຜະລິດໃນຊ່ວງນີ້ ເພາະຈາກການເກັບກຳຂໍ້ມູນຄັ້ງນີ້ມີ 36.3% (74 ຫໜ) ຕິດຕໍ່ບໍ່ໄດ້ ແລະ 35.8% (73 ຫໜ) ບໍ່ເຂົ້າຮ່ວມການສຳຫຼວດ.

ຂໍ້ສັງເກດຈາກການສຳຫຼວດຄັ້ງນີ້ແມ່ນການນຳໃຊ້ເຕັກໂນໂລຊີຂອງຜູ້ຜະລິດສິນຄ້າໂອດອບໃນການຕະຫຼາດເພື່ອຂາຍສິນຄ້າຜ່ານລະບົບອອນລາຍແມ່ນມີໜ້ອຍຫຼາຍ ເຊິ່ງຖືເປັນບັນຫາທ້າທາຍໃນຍຸກການຕະຫຼາດທີ່ຕ້ອງປັບໂຕເຂົ້າໃນວິຖີການດຳລົງຊີວິດແບບໃໝ່ໃນຊ່ວງລະບາດ ແລະ ຫຼັງການລະບາດແລ້ວກໍຕາມ. ການສົ່ງເສີມໃຫ້ນຳໃຊ້ ແລະ ພັດທະນາຄວາມສາມາດຂອງຜູ້ປະກອບການຜະລິດສິນຄ້າໂອດອບ ກ່ຽວກັບເຕັກໂນໂລຊີສະໄໝໃໝ່ຮັບໃຊ້ການຕະຫຼາດ ແລະ ການຂາຍຈຶ່ງຈຳເປັນ ແລະ ຄວນໄດ້ຮັບການຊ່ວຍເຫຼືອຈາກພາກສ່ວນທີ່ກ່ຽວຂ້ອງ.

<u>ຂໍ້ຈຳກັດ</u>: ບົດສຶກສານີ້ໄດ້ເຮັດການສຳຫຼວດທາງອອນລາຍເປັນເຄື່ອງມືໃນການເກັບກຳຂໍ້ມູນ ອາດເຮັດໃຫ້ຜູ້ຜະລິດສິນຄ້າໂອດອບບໍ່ຊຳນານຕໍ່ກັບວິທີການເກັບກຳຂໍ້ມູນໃນຮູບແບບນີ້ເຊິ່ງເຮັດໃຫ້ມີຜູ້ຕອບກັບບໍ່ສູງເທົ່າທີ່ຄວນ; ດັ່ງນັ້ນ ຖ້າມີການສຶກສາຕິດພັນກັບຫົວຂໍ້ນີ້ໃນອະນາຄົດອາດເຮັດທັງເປັນຮູບແບບສຳພາດໂຕຕໍ່ໂຕຄຽງຄູ່ກັບການສຳພາດທາງອອນລາຍເພື່ອໃຫ້ໄດ້ຂໍ້ມູນທີ່ກວ້າງ ແລະ ຫຼາກຫຼາຍກວ່າເກົ່າໃນການວິເຄາະ.

## ເອກະສານອ້າງອີງ


ECCIL. (2021). *The Economic Impact of the COVID-19 Outbreak: Survey Report*. Retrieved from European Chamber of Commerce and Industry in Laos: https://eccil.org/wp-content/uploads/2021/05/2021-05-ECCIL-EuroCham-Economic-impact-of-the-COVID-19-Survey-report.pdf

UNIDO. (2020). *Impact Assessment of COVID-19 on Lao PDR's Manufacturing Firms*. Retrieved from www.unido.org/sites/default/files/files/2021-03/UNIDO%20COVID19%20Assessment_LAO%20PDR_FINAL.pdf

UNIDO. (2021). *UNIDO Survey on the Impact of COVID-19 on Manufacturing Firms in Lao PDR*. Retrieved from UNIDO Lao PDR: www.unido.org/covid19_surveys

ມະໂນລົມ, ທ. ນ. (2020). ຜົນກະທົບຂອງພະຍາດໂຄວິດ-*19* ທີ່ມີຕໍ່ອຸດສາຫະກຳການຜະລິດໃນເຂດນິຄົມອຸດສາຫະກຳ ແລະ ການຄ້າ ວຽງຈັນ-ໂນນທອງ *(VITA)*. Retrieved from https://drive.google.com/file/d/1Wtnf0XjrlkpnbbLRRisolC-KUUmX3bjn/view

ອ່ອນພັນດາລາ, ພ. ນ. ດ. (2021). ຜົນກະທົບຂອງການແຜ່ລະບາດຂອງໂຄວິດ-*19* ຮອບທີ *2* ຕໍ່ກັບຫົວໜ່ວຍທຸລະກິດ ຢູ່ ສປປ ລາວ Retrieved from ຫ້ອງວ່າການ ສູນກາງພັກ: o.phanhpakit@gmail.com